# ປະສານໃຈ

(ຮ້ອງໝູ່ຍິງຊາຍ)

(ຍິງຮ້ອງດ່ຽວ) ດັ່ງຟ້າອຳໄພ ຈິດໃຈສຸຂສົມຊື່ນບານ
ເຮົາມາຮວມກັນ ພົບປະສັງສັນວັນນີ້
ພັດພາກກັນໄກ ນັບໄດ້ເກືອບສາມສິບປີ
ຫວນມາພົບກັນວັນນີ້ ຍິນດີສລອງເຮຮາ

(ຊາຍຮ້ອງດ່ຽວ) ສຸດແສນຍິນດີ ທີ່ມາຮ່ວມໃຈປະສານ
ຜູ້ອຳນວຍການ ອາຈານຫຼາຍຄົນມີໜ້າ
ເພື່ອນຝູງນັກຮຽນ ທີ່ເຄີຍຮ່ວມພຽນສຶກສາ
ຫຼາຍປີຈຶ່ງໄດ້ພົບໜ້າ ເຮົາມາມ່ວນຊື່ນສຸຂສັນ

(ໝູ່ຍິງຊາຍ) ເມືອງ ກຽວເບີຕທ໌ ອາຣີຊ້ອນນາ
ສອງພັນຫ້າ ເຮົາມາພົບກັນ
ຄຣູຫຼັກເຈັດ ແລະນັກສຶກສາ
ສິບສອງມີນາ ພົບປະສັງສັນ
ຮ່ວມຈັບມື ມ່ວນຊື່ນສລອງ
ເອື້ອຍອ້າຍນ້ອງ ປອງດອງປະສານ
ສາມັກຄີໄມຕຣີສັມພັນ ຮັກແພງກັນໃຫ້ໝັ້ນຍືນຍາວ

(ຍິງຮ້ອງດ່ຽວ) ເຖິງຄາວຈາກກັນ ຍຶດໝັ້ນໃນຄວາມຮັກແພງ
ເພື່ອເປັນແວ່ນແຍງ ຊ່ອງທາງແກ່ລູກຫຼານລາວ
ແມ່ພິມຂອງຊາຕ ນັ້ນຄືໜ້າທີ່ຂອງເຮົາ
ເສີມສ້າງຊ່ວຍສັງຄົມລາວ ຂອງເຮົາໃຫ້ກ້າວເດີນໄປ